ລາງວັນຣາມອນແມັກໄຊໄຊປີ 2005 ສາຂາຜູ້ນຳພາຊຸມຊົນ
(The 2005 Ramon Magsaysay Award for Community Leadership)

ບົດຕອບສະໜອງຂອງ ສົມບັດ ສົມພອນ ໃນພິທີຮັບລາງວັນຣາມອນແມັກໄຊໄຊ

ຄັ້ງວັນທີ 31 ສິງຫາ 2005, ມະນີລາ, ປະເທດຟີລິບປິນ

ຮຽນ ທ່ານ ຫົວໜ້າຜູ້ພິພາກສາ ຮິລາຣີໂອ ດາວິດ ທີ່ນັບຖື, ຄະນະກຳມະການມູນິທິຣາງວັນ ເຣມອນ ແມັກໄຊໄຊ, ແຂກຜູ້ມີກຽດ, ມິດສະຫາຍທີ່ໄດ້ຮັບຣາງວັນ, ທ່ານຍິງ ແລະທ່ານຊາຍ, ຂໍສະບາຍດີ.

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງຍິ່ງ ທີ່ມື້ນີ້ ໄດ້ມາຢືນຢູ່ທີ່ນີ້ເພື່ອຮັບຣາງວັນ ເຣມອນ ແມັກໄຊໄຊ ປະຈຳປີ 2005 ໃນສາຂາການນຳຊຸມຊົນ. ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງ ມູນິທິຣາງວັນ ເຣມອນ ແມັກໄຊໄຊ ແລະຄະນະກຳມະການຕັດສິນຂອງມູນິທິ ທີ່ໄດ້ມອບຣາງວັນອັນສຳຄັນນີ້ໃຫ້ ຂ້າພະເຈົ້າ.

ຣາງວັນນີ້ ບໍ່ແມ່ນສຳລັບຂ້າພະເຈົ້າ ຫຼືພະນັກງານໃນອົງການປາແດກ ແຕ່ຜູ້ດຽວ, ແຕ່ຫາກເປັນ ຣາງວັນທີ່ມອບໃຫ້ກັບອາສາສະໝັກຜູ້ໜຸ່ມນ້ອຍ, ແລະຜູ້ນຳໄວໜຸ່ມຂອງລາວ ທີ່ໄດ້ສະແດງໃຫ້ ຜູ້ໃຫຍ່ຄືເຮົາເຫັນວ່າ ເຂົາເຈົ້າກໍ່ມີຄວາມສາມາດ ແລະສິດທີ່ຈະຮຽກຮ້ອງເອົາພື້ນທີ່ໃນການວາງ ເສັ້ນທາງເພື່ອການພັດທະນາຕົນເອງ ແລະຊຸມຊົນຂອງເຂົາ. ຂ້າພະເຈົ້າເຊື່ອວ່າເຂົາເຈົ້າມີຄວາມ ຕັ້ງໃຈ, ຄວາມຫວັງ, ແລະຄວາມຝັນຕໍ່ກັບອະນາຄົດທີ່ດີກວ່າ, ເຊິ່ງກໍ່ເປັນສິ່ງທີ່ຣາງວັນອັນຊົງກຽດນີ້ ເລັງເຫັນ ແລະສະເຫຼີມສະຫຼອງເອົາ.

ສຳລັບຕົນເອງ ແລະອົງກອນປາແດກຂອງຂ້າພະເຈົ້າແລ້ວ, ຣາງວັນນີ້ ເປັນແຮງຜັກດັນອັນຍິ່ງໃຫຍ່ ແລະເປັນສິ່ງທີ່ຢັ້ງຢືນວ່າ ກຸ່ມອົງການຈັດຕັ້ງທາງສັງຄົມທ້ອງຖິ່ນ ຄືພວກເຮົາ ກໍ່ມີບົດບາດສຳຄັນ ໃນການພັດທະນາສັງຄົມລາວ. ຂ້າພະເຈົ້າຫວັງວ່າ ຣາງວັນນີ້ຍັງຈະເສີມສ້າງຄວາມໝັ້ນໃຈໃຫ້ກັບ ອົງການຈັດຕັ້ງທີ່ນຳໂດຍຄົນລາວ ໄດ້ພັດທະນາ ແລະເຕີບໃຫຍ່.

ສິ່ງທີ່ຂ້າພະເຈົ້າໄດ້ສຳເລັດມາຮອດປະຈຸບັນນີ້ ເປັນພຽງຈຸດເລີ່ມຕົ້ນນ້ອຍໆເທົ່ານັ້ນ. ເພື່ອໃຫ້ມີຜົນ ໄລຍະຍາວ, ເຮົາຍັງຕ້ອງການວິທີການພັດທະນາແບບສອດຄ່ອງ ແລະຮອບດ້ານ ໂດຍວາງ ກຽດຂອງມະນຸດ, ແລະຄວາມເປັນທຳດ້ານເສຖະກິດ ແລະສັງຄົມສຳລັບທຸກຄົນ ໃຫ້ເປັນຈຸດໃຈກາງຂອງ ການພັດທະນາ. ເພື່ອໃຫ້ສຳເລັດໄດ້ແນວນີ້, ບໍ່ແມ່ນແຕ່ສອງສາມອົງກອນ, ຫຼືຄວາມຕັ້ງໃຈຂອງສອງ ສາມຄົນ ຈະເຮັດໄດ້; ມັນຕ້ອງອາໄສການມີສ່ວນຮ່ວມຂອງທຸກຄົນເພື່ອໃຫ້ເປັນການເຄື່ອນໄຫວທີ່

ຍືນຍົງ: ທັງຈາກລັດຖະບານ, ພາກສ່ວນເອກະຊົນ, ແລະບຸກຄົນຈາກທຸກຂະແໜງ, ທຸກໄວ, ໂດຍສະເພາະແມ່ນໄວໜຸ່ມຂອງເຮົາທີ່ປະກອບເປັນເຄິ່ງໜຶ່ງຂອງປະຊາກອນທັງໝົດ.

ຖ້າວັດແທກຈາກຜະລິດຕະພັນພາຍໃນປະເທດ, ລາວ ຍັງຖືວ່າທຸກຍາກ, ແລະຊ່ອງຊານການພັດທະນາສ່ວນໃຫຍ່ ກໍ່ຍ້ຳເຕືອນພວກເຮົາເຖິງຈຸດນີ້ຢູ່ສະເໝີ. ລາວ ອາດທຸກຍາກດ້ານເງິນຄຳ, ແຕ່ພວກເຮົາຮັ່ງມີດ້ານອື່ນ. ເຮົາມີວັດທະນະທຳທີ່ອຸດົມສົມບູນ ແລະຊັບພະຍາກອນຄວາມຮູ້ດັ້ງເດີມ ແລະປະສົບການທ້ອງຖິ່ນ; ຊຸມຊົນຂອງເຮົາ ຖືວ່າມີຄວາມສາມັກຄີ ເປັນອັນໜຶ່ງອັນດຽວກັນ. ແລະເຮົາມີປະຊາກອນໜຸ່ມນ້ອຍ ທີ່ມີເຫື່ອແຮງ ທີ່ຍັງບໍ່ໄດ້ຖືກເປື່ອຍເຍື່ອຍຍ້ອນລັດທິບໍລິໂພກນິຍົມ ແລະການຄ້າ. ເຮົາຄວນຫັນຄຸນສົມບັດເຫຼົ່ານີ້ ໃຫ້ເປັນຕົ້ນທຶນໃນການພັດທະນາຂອງເຮົາ ແທນທີ່ຈະຖິ້ມຊັບສົມບັດອັນມີຄ່າໄປລ້າໆ ໂດຍການຮັບເອົາຮູບແບບການພັດທະນາທີ່ເນັ້ນການຂະຫຍາຍຕົວທາງເສຖະກິດ ແລະທຳລາຍຄວາມຍືນຍົງດ້ານສິ່ງແວດລ້ອມ ແລະສັງຄົມ. ເຮົາຕ້ອງປູເສັ້ນທາງການພັດທະນາຂອງເຮົາເອງ ແລະສ້າງສົມດຸນໃຫ້ຍຸທະສາດການພັດທະນາ ເພື່ອສ້າງຄວາມເຂັ້ມແຂງໃຫ້ກັບການເພິ່ງຕົນເອງ ແລະຫຼີກລ່ຽງຄວາມຜິດພາດທີ່ສ້າງຄວາມໝົ່ນໝອງໃຫ້ກັບຫຼາຍສັງຄົມທີ່ກຳລັງພັດທະນາດ້ວຍໜີ້ສິນ, ຄວາມແຕກແຍກ, ພະຍາດ, ແລະຄວາມເຊື່ອມໂຊມທາງສິ່ງແວດລ້ອມ.

ວິທີການຂອງປາແດກ ໃນການພັດທະນາ ແມ່ນການສ້າງຄວາມສົມດຸນລະຫວ່າງບົດຮຽນດ້ານການພັດທະນາຈາກພາຍນອກ ກັບຄວາມຮູ້ ແລະປະສົບການຈາກພາຍໃນ. ພວກເຮົາສ້າງຄວາມສົມດຸນນີ້ດ້ວຍການປຶກສາຫາລືຢ່າງກວ້າງຂວາງ ແລະດຶງເອົາໄວໜຸ່ມເຂົ້າມາມີສ່ວນຮ່ວມໃນແຖວໜ້າຂອງການພັດທະນາ. ວິທີການນີ້ໄດ້ຜົນ ແລະພວກເຮົາໄດ້ຮັບການຊ່ວຍເຫຼືອທີ່ເພີ່ມຂຶ້ນຊັກໄຊ້. ພວກເຮົາເຊື່ອວ່າ ດ້ວຍກຳລັງແຮງຂອງພວກເຮົາ ແລະດ້ວຍການສະໜັບສະໜູນຈາກຜູ່ຫວັງດີ, ພວກເຮົາຈະສາມາດສ້າງສັງຄົມທີ່ມີຄວາມສົມດຸນດ້ານສັງຄົມ, ເສຖະກິດ, ແລະສິ່ງແວດລ້ອມ ທີ່ຮັບປະກັນຊີວິດການເປັນຢູ່ທີ່ດີສຳລັບໝົດທຸກຄົນ, ແລະເພື່ອຄົນຮຸ່ນຕໍ່ໄປ.

ຂອບໃຈ